Minnesota Department of Education

ໃນການສອບເສັງປະເມີນຜົນໃນທົ່ວຣັຖມີຫຍັງແດ່ທີ່ນັກຮຽນຊັ້ນມັດທະຍົມຕອນປາຍຈະສອບເສັງໃນປີນີ້?

ຕາຕະລາງຂ້າງລຸ່ມ ນີ້ສະແດງໃຫ້ເຫັນ ການສອບເສັງປະເມີນຜົນໃນທົ່ວຣັຖ ສະເພາະນັກຮຽນໃນຊັ້ນຮຽນປີທີ 9, ປີທີ 10, ປີທີ 11, ແລະ ປີທີ 12 ເຊິ່ງຈະໄດ້ຮັບການສອບເສັງໃນປີ 2013-2014. ການປະເມີນຜົນການສອບເສັງເຫຼົ່ານີ້ແມ່ນເພື່ອ 1) ວັດແທກຜົນສຳເລັດຂອງນັກຮຽນ, 2) ໝັ້ນໃຈຕໍ່ຄວາມເຊື່ອໝັ້ນຂອງໂຮງຮຽນ ແລະ ເມືອງ 3) ເຮັດໃຫ້ນັກຮຽນໄດ້ຕາມເງື່ອນໄຂຂອງການປະເມີນຜົນການສອບເສັງຈົບຊັ້ນຂອງຣັຖ. ເມືອງອາດຈະມີການສອບເສັງປະເມີນຜົນເພີ່ມເຕີມ, ດັ່ງນັ້ນ ພໍ່ແມ່/ຜູ້ປົກຄອງຄວນຈະຕິດຕໍ່ຫາໂຮງຮຽນຂອງລູກຫຼານຂອງພວກເຂົາ ເພື່ອຂໍຂໍ້ມູນເພີ່ມເຕີມ. ຂໍ້ສັງເກດ: ເຖິງວ່າ MCA ມີຢູ່ໃນຕາຕະລາງຂ້າງລຸ່ມ ນີ້, ນັກຮຽນທີ່ຢູ່ໃນໂປຣແກຣມການສຶກສາສ່ວນບຸກຄົນ (Individualized Education Program – IEP) ອາດຈະໄດ້ຮັບການສອບເສັງປະເມີນຜົນປະເພດອື່ນ (MCA-ທີ່ຖືກດັດແປງ ແລະ MTAS) ແທນການສອບເສັງປະເມີນຜົນ MCA. ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາເຂົ້າເບິ່ງ ເອກະສານໃຫ້ຂໍ້ມູນຂອງພໍ່ແມ່ກ່ຽວກັບການສອບເສັງປະເມີນຜົນເຫຼົ່ານີ້ຢູ່ທີ່ເວັບໄຊທ໌ຂອງ MDE.

ນັກຮຽນຕ້ອງສາມາດບັນລຸໄດ້ຕາມເງື່ອນໄຂຂອງການສອບເສັງຈົບຊັ້ນໃນວິຊາຫັດອ່ານ, ຄະນິດສາດ, ແລະ ຫັດຂຽນ ເພື່ອຈະໄດ້ຮັບໃບຢັ້ງຢືນຈົບຊັ້ນມັດທະຍົມຕອນປາຍ ຈາກໂຮງຮຽນມັດທະຍົມຕອນປາຍຂອງຣັຖມິນນີໂຊຕາ. ເຖິງຢ່າງໃດກໍ່ຕາມ, ການອອກກົດໝາຍທີ່ໄດ້ຜ່ານໄປແລ້ວໃນປີ 2013 ໄດ້ປ່ຽນແປງເງື່ອນໄຂເຫຼົ່ານີ້ດັ່ງສະແດງໃຫ້ເຫັນລຸ່ມ ນີ້:

- ນັກຮຽນທີ່ປະຈຸບັນໄດ້ລົງທະບຽນໃນຊັ້ນຮຽນປີທີ 9 ແລະ 10 ຈະໄດ້ຮັບການສອບເສັງປະເມີນຜົນຊຸດໃໝ່ ເພື່ອໃຫ້ສາມາດບັນລຸໄດ້ຕາມເງື່ອນໄຂຂອງການປະເມີນຜົນການສອບເສັງຈົບຊັ້ນ ທີ່ຈະສະໜອງຂໍ້ມູນກ່ຽວກັບ ຄວາມກຽມພ້ອມໃນການເຮັດວຽກ ແລະ ການເຂົ້າຮຽນວິທະຍາໄລ. ການສອບເສັງປະເມີນຜົນເຫຼົ່ານີ້ຈະໄດ້ເລີ່ມປະຕິບັດໃນຕົ້ນປີ 2014-2015 ແລະ ຕາຕະລາງຈະໄດ້ຮັບການປັບປຸງໃຫ້ສອດຄ່ອງ.
- ນັກຮຽນທີ່ປະຈຸບັນກຳລັງລົງທະບຽນໃນຊັ້ນຮຽນປີທີ 11 ແລະ 12 ມີທາງເລືອກຈຳນວນໜຶ່ງໃນການສອບເສັງປະເມີນຜົນ ເພື່ອໃຫ້ໄດ້ຕາມເງື່ອນໄຂຂອງການສອບເສັງປະເມີນຜົນການຈົບການສຶກສາ ດັ່ງທີ່ສະແດງໃຫ້ເຫັນດັ່ງລຸ່ມ ນີ້.
- ສຳລັບຂໍ້ມູນເພີ່ມເຕີມ, ຈົ່ງເຂົ້າໄປເບິ່ງໜ້າເອກະສານຂໍ້ມູນຂອງພໍ່ແມ່ຜູ້ປົກຄອງ ກ່ຽວກັບເງື່ອນໄຂໃນການປະເມີນຜົນການສອບເສັງຈົບຊັ້ນ (Graduation Assessment Requirements Parent Fact Sheet) ຢູ່ເວັບໄຊທ໌ຂອງ MDE.

ການສອບເສັງປະເມີນຜົນທົ່ວຣັຖທີ່ຈະຈັດຂຶ້ນໃນປີ 2013-2014

ຊັ້ນຮຽນປີທີ 9 (ຊັ້ນຮຽນປີ 2017)	ຊັ້ນຮຽນປີທີ 10 (ຊັ້ນຮຽນປີ 2016)	ຊັ້ນຮຽນປີທີ 11 (ຊັ້ນຮຽນປີ 2015)	ຊັ້ນຮຽນປີທີ 12 (ຊັ້ນຮຽນປີ 2014)
ສອບເສັງວິຊາ ວິທະຍາສາດຂອງ MCA ເພື່ອທົດສອບ ຄວາມເຊື່ອໝັ້ນ (ສອບເສັງຄັ້ງດຽວໃນ ຊັ້ນມັດທະຍົມຕອນ ປາຍ ເມື່ອຮຽນ ຫຼັກສູດວິຊາ ວິທະຍາສາດສິ່ງທີ່ມີ ຊີວິດ/ຊີວະສາດ) *ບໍ່ມີການສອບເສັງປະ ເມີນຜົນການຈົບການ ສຶກສາ*	ສອບເສັງວິຊາຫັດ ອ່ານຂອງ MCA ເພື່ອທົດສອບຄວາມ ເຊື່ອໝັ້ນ **ແລະ** ສອບເສັງວິຊາ ວິທະຍາສາດ MCA ເພື່ອທົດສອບຄວາມ ເຊື່ອໝັ້ນ (ຖ້າຍັງບໍ່ ທັນສອບເສັງແລ້ວ) *ບໍ່ມີການສອບເສັງປະ ເມີນຜົນການຈົບການ ສຶກສາ*	ສອບເສັງວິຊາຄະນິດສາດຂອງ MCA ເພື່ອທົດສອບຄວາມເຊື່ອໝັ້ນ **ແລະ** ສອບເສັງວິຊາວິທະຍາສາດຂອງ MCA ເພື່ອທົດສອບຄວາມເຊື່ອໝັ້ນ (ຖ້າຍັງບໍ່ ທັນສອບເສັງແລ້ວ) *ບັນລຸໄດ້ຕາມເງື່ອນໄຂຂອງການປະເມີນ ການສອບເສັງຈົບຊັ້ນໃນວິຊາຫັດອ່ານ, ຄະນິດສາດ, ແລະ ຫັດຂຽນ*: • ມີຄວາມສາມາດທາງດ້ານ MCA ຫຼື ຜ່ານການສອບເສັງ ຄືນຂອງ GRAD, **ຫຼື** • ສອບເສັງ**ຫຼື** ໄດ້ສອບເສັງ ACT/WorkKeys/ ປະສົບຜົນສຳເລັດ/ASVAB, **ຫຼື** • ໄດ້ຮັບຄະແນນຈາກເມືອງທີ່ ກຳນົດວ່າ ເປັນການປະເມີນ ຜົນແບບທຽບເທົ່າ.	ສອບເສັງວິຊາວິທະຍາສາດຂອງ MCA ເພື່ອທົດສອບຄວາມເຊື່ອໝັ້ນ (ຖ້າຍັງບໍ່ ທັນໄດ້ສອບເສັງແລ້ວ) *ບັນລຸໄດ້ຕາມເງື່ອນໄຂໃນການປະເມີນ ການຈົບການສຶກສາໃນວິຊາຫັດອ່ານ, ຄະນິດສາດ, ແລະ ຫັດຂຽນ*: • ມີຄວາມສາມາດທາງດ້ານ MCA ຫຼື ຜ່ານການສອບເສັງ ຄືນຂອງ GRAD, **ຫຼື** • ສອບເສັງ**ຫຼື** ໄດ້ສອບເສັງ ACT/WorkKeys/ ປະສົບຜົນສຳເລັດ/ASVAB, **ຫຼື** • ໄດ້ຮັບຄະແນນຈາກເມືອງທີ່ ກຳນົດວ່າ ເປັນການປະເມີນ ຜົນແບບທຽບເທົ່າ.